ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທນບ ໄຊສົມບູນ ເດີນໜ້າສະໜອງສິນເຊື່ອເພື່ອປະຊາຊົນ



ທ່ານ ຂັນແກ້ວ ສີບຸນເຮືອງ ຫົວໜ້າທະນາຄານນະໂຍບາຍ (ທນບ) ສາຂາໄຊສົມບູນ ໄດ້ແຈ້ງຕໍ່ຜູ້ສື່ຂ່າວວ່າ: ຍອດສິນເຊື່ອ ຮອດທ້າຍເດືອນ 12/2021 ມີທັງໝົດ 60,57 ຕື້ກວ່າກີບ ເພີ່ມຂຶ້ນ 0,84% ທຽບໃສ່ປີກ່ອນ; ໄລຍະສັ້ນ ກວມເອົາ 7,42%, ໄລຍະກາງ ກວມເອົາ 9,50%, ໄລຍະຍາວ ກວມເອົາ 83,06%, ໃນນີ້ຂະແໜງປູກຝັງ ກວມເອົາ 18,98%, ລ້ຽງສັດ ກວມເອົາ 73,19%, ຫັດຖະກຳ ກວມເອົາ 2,28%, ອຸດສາຫະກຳ-ປຸງແຕ່ງ ກວມເອົາ 0,99% ແລະ ຂະແໜງການຄ້າ-ບໍລິການ ກວມເອົາ 4,52%.

ຫົວໜ້າທະນາຄານນະໂຍບາຍ (ທນບ) ສາຂາໄຊສົມບູນ ໃຫ້ຮູ້ຜົນປະໂຫຍດໃນການນຳໃຊ້ສິນເຊື່ອໃນເມືອງເປົ້າໝາຍ 44,70 ຕື້ກວ່າກີບ ກວມເອົາ 73,81% ຂອງຍອດສິນເຊື່ອ, ເພີ່ມຂຶ້ນ 0,02% ທຽບໃສ່ປີກ່ອນ; ໃນນີ້ ໄລຍະສັ້ນ 3,25 ຕື້ກວ່າກີບ, ໄລຍະກາງ 4,51 ຕື້ກວ່າກີບ, ໄລຍະຍາວ 36,94 ຕື້ກວ່າກີບ; ສະເພາະສິນເຊື່ອບ້ານ 3 ສ້າງ ມີ 2,71 ຕື້ກວ່າກີບ ກວມເອົາ 4,48%, ຂອງຍອດສິນເຊື່ອ, ເພີ່ມຂຶ້ນ 1,18% ທຽບໃສ່ປີກ່ອນ; ໃນນີ້ ໄລຍະສັ້ນ 28.889.000 ກີບ, ໄລຍະກາງ 190.566.000 ກີບ, ໄລຍະຍາວ 2,49 ຕື້ກວ່າກີບ; ສຳລັບສິນເຊື່ອຈຸດສຸມລັດຖະບານ ແລະ ທ້ອງຖິ່ນມີ 13,14 ຕື້ກວ່າກີບ ກວມເອົາ 21,70% ຂອງຍອດສິນເຊື່ອ, ເພີ່ມຂຶ້ນ 0,48% ທຽບໃສ່ປີກ່ອນ; ໃນນີ້ ໄລຍະສັ້ນ 1,21 ຕື້ກວ່າກີບ, ໄລຍະກາງ 1,05 ຕື້ກວ່າກີບ, ໄລຍະຍາວ 10,87 ຕື້ກວ່າກີບ.

 

ກ່ຽວກັບການເຂົ້າເຖິງສິນເຊື່ອ ຢູ່ເມືອງເປົ້າໝາຍ ກວມເອົາ 3 ເມືອງ, ກວມ 96,87% ຂອງຈຳນວນບ້ານທັງໝົດ (64 ບ້ານ) ໃນນີ້ມີບ້ານທຸກຍາກ ກວມ 95,45%, ຈັດຕັ້ງກຸ່ມກູ້ຢືມໄດ້ 753 ກຸ່ມ, ປະຊາຊົນເຂົ້າເຖິງແຫຼ່ງທຶນ ກວມ 40,50% ຂອງຄອບຄົວທັງໝົດ (14.534 ຄອບຄົວ); ລາຍບຸກຄົນມີ 106 ລາຍ ໃນນີ້ຄອບຄົວທຸກຍາກ ກວມ 4,49% ຂອງຄອບຄົວທຸກຍາກທັງໝົດ (2.027 ຄອບຄົວ); ບ້ານ 3 ສ້າງ ກວມເອົາ 5 ເມືອງ, 11 ບ້ານ ເທົ່າກັບ 100% ໃນນີ້ມີບ້ານທຸກຍາກ 3 ບ້ານ, ຈັດຕັ້ງກຸ່ມກູ້ຢືມເງິນໄດ້ 168 ກຸ່ມ ປະຊາຊົນເຂົ້າເຖິງແຫຼ່ງທຶນ ກວມ 7,22% ທຽບໃສ່ຄອບຄົວທັງໝົດ 3.032 ຄອບຄົວໃນນີ້: ຄອບຄົວທຸກຍາກ 33 ຄອບຄົວ; ຈຸດສຸມຂອງລັດຖະບານ ກວມເອົາ 2 ເມືອງ, ຈຳນວນ 14 ບ້ານ (ບ້ານຈຸດສຸມ 19 ບ້ານ) ເທົ່າກັບ 73,68%, ໃນນີ້ບ້ານທຸກຍາກ 18 ບ້ານ ເທົ່າກັບ 94,74% ຂອງບ້ານທຸກຍາກ 19 ບ້ານ, ຈັດຕັ້ງກຸ່ມກູ້ຢືມເງິນໄດ້ 178 ກຸ່ມ, ປະຊາຊົນ ເຂົ້າເຖິງແຫຼ່ງທຶນ ກວມເອົາ 46,67%, ທຽບໃສ່ຄອບຄົວທັງໝົດ 2.104 ຄອບຄົວ), ໃນນີ້ຄອບຄົວທຸກຍາກ ກວມເອົາ 27,43 % (ທຽບໃສ່ຄອບຄົວທຸກຍາກທັງໝົດ 1.670 ຄອບຄົວ).

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ເສດຖະກິດລາວ ຈະເຂັ້ມແຂງຖ້າປວງຊົນຮ່ວມແຮງ ນຳໃຊ້ເງິນກີບ